ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງອຸດສາຫະກຳ ແລະ ຫັດຖະກຳ

ເລກທີ 062 /ອຫ

# ແຈ້ງການ

ເຖິງ : ພະແນກອຸດສາຫະກຳ ແລະ ຫັດຖະກຳ ແຂວງ, ກຳແພງນະຄອນວຽງຈັນ ແລະ ເຂດພິເສດໄຊສົມບູນ

ເລື່ອງ : ກຳນົດມາດຕະຖານການປະກອບລົດຈັກ ແລະ ການນຳເຂົ້າສິ້ນສ່ວນ-ອາໄຫຼ່ລົດຈັກ 2 ລໍ້ ເພື່ອປະກອບຢູ່ໂຮງງານ.

ໃນທີ່ຜ່ານມາໄດ້ສັງເກດເຫັນວ່າ ວຽກງານອຳນວຍຄວບຄຸມ ແລະ ສົ່ງເສີມກິດຈະການປະກອບລົດຈັກ 2 ລໍ້ຍັງບໍ່ທັນກະດູກຊຸກຍູ້, ສົ່ງເສີມ ແລະ ດຶງດູດໄດ້ດີໃນການລົງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າໃນການສ້າງໂຮງຈັກໂຮງງານ ແລະ ຜະລິດສິ້ນສ່ວນອາໄຫຼ່ລົດຈັກຕ່າງໆເພື່ອສ້າງພື້ນພາງອຸດສາຫະກຳຢູ່ ສ ປ ປ ລາວ ໃຫ້ກ້າເປີດເກີດຂຶ້ນແລະ ຂະຫຍາຍຕົວຢ່າງກວ້າງຂວາງກໍຄືຫຼຸດຜ່ອນຂັ້ນຕອນຕ່າງໆທີ່ເປັນອຸປະສັກໃນການດຳເນີນທຸລະກິດການຜະລິດ.

ດັ່ງນັ້ນ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ ຈຶ່ງຂໍແຈ້ງລະບຽບຫຼັກການ ເພື່ອຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

1./ ກຳນົດມາດຕະຖານການປະກອບລົດຈັກ 2 ລໍ້ ເປັນ 03 ຮູບແບບຄື:

1. ຮູບແບບ ແອສເຄດີ *SKD* .
2. ຮູບແບບ ຊີເຄດີ *CKD* .
3. ຮູບແບບ ໄອເຄດີ *IKD* .

<u>*SKD*</u> ຂຽນຫຍໍ້ຈາກພາສາສາກົນຂອງຄຳສັບ "*Semi-Knock Down*" ໝາຍຄວາມວ່າ : ລົດຈັກທີ່ປະກອບແລ້ວໄດ້ຖືກແກະ ແລະ ແຍກອອກຈາກກັນເປັນສິ້ນສ່ວນຜູ້ໃຫຍ່ມີຈຳນວນເຄິ່ງໜຶ່ງຈາກຕ່າງປະເທດ ແລະ ນຳເຂົ້າເປັນລັກສະນະສິ້ນສ່ວນມາປະກອບຢູ່ໃນໂຮງງານ.

<u>*CKD*</u> ຂຽນຫຍໍ້ຈາກພາສາສາກົນຂອງຄຳສັບ "*Complete Knock Down*" ໝາຍຄວາມວ່າ : ລົດຈັກທີ່ປະກອບແລ້ວໄດ້ຖືກແກະ ແລະ ແຍກອອກຈາກກັນລະອຽດເປັນສິ້ນສ່ວນຜູ້ໃຫຍ່ມັນ ( ຍົກເວັ້ນແຕ່ພາກສ່ວນຈັກ ) ຈາກຕ່າງປະເທດ ແລະ ນຳເຂົ້າເປັນລັກສະນະສິ້ນສ່ວນມາປະກອບຢູ່ໃນໂຮງງານ.

<u>*IKD*</u> ຂຽນຫຍໍ້ຈາກພາສາສາກົນຂອງຄຳສັບ "*Incomplete Knock Down*" ໝາຍຄວາມວ່າ : ລົດຈັກທີ່ປະກອບແລ້ວໄດ້ຖືກແກະ ແລະ ແຍກອອກຈາກກັນແບບ ຊີເຄດີ *CKD* ຈາກຕ່າງປະເທດ ແລະ ນຳເຂົ້າເປັນລັກສະນະສິ້ນສ່ວນມາປະກອບຢູ່ໃນໂຮງງານ ແຕ່ບໍ່ຄົບຊຸດ ຊຶ່ງສິ້ນສ່ວນຈຳນວນໜຶ່ງແມ່ນຜະລິດ ແລະ ຕົບແຕ່ງຢູ່ພາຍໃນປະເທດ.

2./ ຮູບແບບ ແອສເຄດີ *SKD*,ຊີເຄດີ *CKD* ແລະ ໄອເຄດີ *IKD* ມີຄຸນລັກສະນະລະອຽດດັ່ງນີ້ :

I. <u>ຮູບແບບ ແອສເຄດີ *SKD*</u> .

1. ພາກສ່ວນເຄື່ອງຈັກປະກອບດ້ວຍ :

- ໝວດເຄື່ອງຈັກ ແລະ ລະບົບເກຍ
- ລະບົບກຳເນີດໄຟຟ້າຄົບຊຸດ
- ທໍ່ໄອເສຍບໍ່ທັນໄດ້ປະກອບໃສ່

2. ພາກສ່ວນຮ່າງລົດປະກອບດ້ວຍ :

- ສຳເລັດການຕິດຈອດ ແລະ ພົ່ນສີຮຽບຮ້ອຍ

3. ພາກສ່ວນເຄື່ອນສົ່ງປະກອບດ້ວຍ :

- ກົງລໍ້ (ລາງ)
- ຕີນລົດທີ່ໄດ້ປະກອບຢາງນອກ-ໃນ ສຳເລັດ ກົງລໍ້2 ອັນບໍ່ທັນໄດ້ປະກອບໃສ່ກັບຮ່າງລົດ

4. ພາກສ່ວນບັງຊາຂັບເຄື່ອນປະກອບດ້ວຍ :

- ເຂົາ,ເຂົາລົດບໍ່ທັນໄດ້ປະກອບໃສ່ຮ່າງລົດຕິດກັບບັນດາພາກສ່ວນບັງຊາຂັບເຄື່ອນ
- ເຂົາລົດບໍ່ທັນໄດ້ປະກອບໃສ່ຮ່າງລົດຕິດກັບບັນດາພາກສ່ວນບັງຊາ
- ຂາສະດາສ
- ຂາເກຍບໍ່ທັນໄດ້ປະກອບໃສ່ກັບຮ່າງລົດ

5. ພາກສ່ວນລະບົບໄຟຟ້າປະກອບດ້ວຍ:

- ລະບົບໄຟຟ້າທີ່ໄດ້ປະກອບໃສ່ກັບໂຄງຮ່າງຂອງລົດນັບທັງໝໍ້ໄຟ -

6. ພາກສ່ວນຫຸ້ມຫໍ່ ແລະ ເຄື່ອງອາໄຫຼ່ສຳຮອງປະກອບດ້ວຍ :

- ໂກບບັງລົມ
- ເບາະນັ່ງ
- ກະຕ່າໃສ່ເຄື່ອງ
- ແປ້ນໃສ່ເຄື່ອງ
- ແວ່ນສ່ອງຫຼັງ
- ຂາຢຽບຟ້າ ແລະ ຫຼັງ ( ຊ້າຍ-ຂວາ )
- ຂາຄ້ຳຄູ່ ແລະ ຂາຄ້ຳດ່ຽວທີ່ບໍ່ທັນໄດ້ປະກອບໃສ່ກັບຮ່າງລົດ

ບັນດາໂຮງງານປະກອບລົດຈັກຮູບແບບດັ່ງກ່າວຕ້ອງມີ ເຄື່ອງມືອຸປະກອນກວດການາດຕະຖານເຕັກນິກກ່ຽວກັບບັນດາຂໍ້ມູນຕົວເລກຄວາມປອດໄພກ່ອນເວລາເອົາລົດອອກຈາກໂຮງງານ.

II. <u>ຮູບແບບ ຊີເຄດີ CKD</u>

1. ພາກສ່ວນເຄື່ອງຈັກປະກອບດ້ວຍ :

- ໝວດເຄື່ອງຈັກ ແລະ ກະປຸກເກຍ
- ພາກສ່ວນກຳເນີດໄຟຟ້າຄົບຊຸດ ບໍ່ທັນໄດ້ປະກອບໃສ່ຮ່າງລົດ
- ຄາບິວຣາເຕີ
- ທໍ່ໄອເສຍບໍ່ທັນໄດ້ປະກອບໃສ່ຮ່າງລົດ

2. ພາກສ່ວນຮ່າງລົດປະກອບດ້ວຍ :

- ບັນດາສິ້ນສ່ວນທີ່ຕິດກັບຮ່າງລົດດ້ວຍບູລອງ ແລະ ນອດຕ່າງໆ
- ພື້ນສີລະອຽດສຳເລັດຮູບບໍ່ທັນໄດ້ຈັບຕິດໃສ່ຮ່າງລົດ

3. ພາກສ່ວນເຄື່ອນສົ່ງປະກອບດ້ວຍ :

- ກົງລໍ້ ( ລາງ )
- ລູກປືນກົງລໍ້ໜ້າ ແລະ ຫຼັງ
- ຕີ້ວລົດ
- ຢາງນອກ
- ຢາງໃນ
- ລະບົບຫ້າມລໍ້

- ຈານເຟືອງໂສ້
- ໂສ້ໃຫຍ່ທີ່ຍັງບໍ່ທັນໄດ້ປະກອບໃສ່ກັບຈານໂສ້

4. ພາກສ່ວນບັນຊາຂັບເຄື່ອນປະກອບດ້ວຍ :
- ບັນດາສິ້ນສ່ວນທັງໝົດ ຊຶ່ງຕິດກັນດ້ວຍບູລອງ ແລະ ນອດຕ່າງໆ ແຕ່ບໍ່ທັນໄດ້ປະກອບໃສ່ກັບຮ່າງລົດ

5. ພາກສ່ວນລະບົບໄຟຟ້າປະກອບດ້ວຍ :
- ລະບົບສາຍໄຟຄົບຊຸດ
- ຊຸດຕາໄຟໃຫຍ່
- ຊຸດຕາໄຟທ້າຍ
- ຊຸດໄຟຊີຍ້ານ ບໍ່ທັນໄດ້ປະກອບໃສ່ກັບຮ່າງລົດ

6. ພາກສ່ວນຊຸ້ມທໍ່ ແລະ ເຄື່ອງອາໄຫຼ່ສຳຮອງປະກອບດ້ວຍ :
- ບັນດາສິ້ນສ່ວນທັງໝົດຢູ່ຮູບນອກ ແລະ ອາໄຫຼ່ສຳຮອງບໍ່ທັນໄດ້ປະກອບໃສ່ກັບຮ່າງລົດແບບດຽວກັບຮູບແບບ SKD

ບັນດາໂຮງງານປະກອບລົດຈັກຮູບແບບດັ່ງກ່າວຕ້ອງມີ ເຄື່ອງມືອຸປະກອນກວດກາມາດຕະຖານເຕັກນິກກ່ຽວກັບບັນດາຂໍ້ມູນຕົວເລກຄວາມປອດໄພກ່ອນເວລາເອົາລົດອອກຈາກໂຮງງານ.

III. <u>ຮູບແບບ ໄອເຄດີ IKD</u> .

ຕ່າງກັບຮູບແບບ ຊີເຄດີ CKD ແຕ່ເພີ່ມເຕີມຄຸນລັກສະນະຕ່າງໆ ແລະ ເງື່ອນໄຂໃດໜຶ່ງດັ່ງນີ້ :

<u>ເງື່ອນໄຂທີ 1</u> ທັງໝົດສິ້ນສ່ວນໃນພາກສ່ວນເຄື່ອງຈັກ,ກະປຸກເກຍ, ພາກສ່ວນກ້ຳເບີດໄຟ ລ້ອນແຕ່ຍັງບໍ່ທັນໄດ້ປະກອບ ແລະ ຕ້ອງມີໝວດສິ້ນສ່ວນທີ່ຜະລິດຢູ່ພາຍໃນປະເທດໃນມູນຄ່າເທົ່າກັບສິບຫ້າເປີເຊັນ 15% ຂອງມູນຄ່າລົດຈັກຄັນໜຶ່ງ.

<u>ເງື່ອນໄຂທີ2</u> ຕ້ອງມີເທັກໂນໂລຢີໃນການຜະລິດຈອດພົ່ນສີໃສ່ບັນດາສິ້ນສ່ວນທີ່ເຮັດດ້ວຍຢາງປາລາສຕິກ,ຮ່າງລົດ,ຖັງນ້ຳມັນ ແລະ ຕ້ອງມີບັນດາສິ້ນສ່ວນທີ່ຜະລິດພາຍໃນປະເທດມີມູນຄ່າເທົ່າກັບສິບເປີເຊັນ 10% ຂອງມູນຄ່າລວມລົດຈັກຄັນໜຶ່ງ.

<u>ເງື່ອນໄຂທີ 3</u> ບັນດາສິ້ນສ່ວນຜະລິດພາຍໃນປະເທດມີມູນຄ່າເທົ່າກັບຊາວເປີເຊັນ 20% ຂອງມູນຄ່າລວມຂອງລົດຈັກຄັນໜຶ່ງ.

<u>ໝາຍເຫດ:</u> ສາລະບານບັນຊີ 1 ,ບັນຊີ 2 ,ບັນຊີ 3 ແລະ ບັນຊີ 4 ຊັດຕິດຊ້ອນທ້າຍແຈ້ງການສະບັບນີ້ ສະແດງເຖິງບັນດາລາຍການສິ້ນສ່ວນລະອຽດຂອງແຕ່ລະຮູບແບບ.ບັນດາກຸ່ມສິ້ນສ່ວນຂອງຮູບແບບ SKD ແລະ CKD ສຳຫຼັບລົດຈັກຜູ້ຍິງ ແລະ ລົດຈັກຜູ້ຊາຍ ບໍ່ມີຄວາມໝາຍເຕັກນິກດ້ານປະກອບແຕ່ຢ່າງໃດ, ຖ້າຫາກວ່າມີບັນດາສິ້ນສ່ວນສະເພາະທາກແຕກຕ່າງກັບ 4 ສາລະບານບັນຊີນີ້ ແລະ ການຕີລາຄາຮູບແບບການປະກອບກໍ່ບໍ່ໄດ້ຄິດໄລ່ເຖິງສິ້ນສ່ວນອາໄຫຼ່ດັ່ງກ່າວ.

3./ ບັນດາໂຮງງານປະກອບ ແລະ ຜະລິດລົດຈັກ 2 ລໍ້ ຕ້ອງມີສາຍໃຍການປະກອບ ແລະ ກວດກາລົດຈັກຢ່າງຄົບຖ້ວນ.ບັນດາເງື່ອນໄຂເຕັກນິກຕ້ອງແທດເໝາະກັບແຕ່ລະຮູບແບບການປະກອບດັ່ງທີ່ກ່າວມາຂ້າງເທິງນັ້ນ.

4./ ບັນດາໂຮງງານປະກອບ ແລະ ຜະລິດລົດຈັກ 2 ລໍ້ ຕ້ອງຈັດຕັ້ງການກວດກາຄຸນນະພາບຂອງລົດ ແລະ ຢັ້ງຢືນການທົດສອບ ແລະ ຮັບຮອງຄຸນນະພາບ ຈຶ່ງນຳເອົາລົດຈັກອອກຈາກໂຮງງານ.

5./ , ບັນດາຜູ້ມີອະນຸຍາດດຳເນີນກິດຈະການໂຮງງານແລ້ວ ຫຼື ຜູ້ສະເໜີຂໍອະນຸຍາດສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານປະກອບ ແລະ ຜະລິດລົດຈັກ 2 ລໍ້ ຕ້ອງປະຕິບັດມາດຕະຖານການປະກອບລົດຈັກ 2 ລໍ້ໃດໜຶ່ງຕາມຮູບແບບ ແອສເຄດີ SKD ເປັນຢ່າງຕ່ຳ ຫຼື ຮູບແບບ CKD ຫຼື ຮູບແບບ IKD ຈຶ່ງຖືວ່າແມ່ນລະບົບໂຮງງານອຸດສາຫະກຳປຸງແຕ່ງຕາມປະມວນຂໍ້ກົດໝາຍວ່າດ້ວຍໂຮງງານສະບັບເລກທີ 103/ອຫ,ລົງວັນທີ 21/2/1992 ຢ່າງຖືກຕ້ອງ.

6./ ບັນດາໂຮງງານປະກອບລົດຈັກໃໝ່ 100% ຕ້ອງມີໃບມອບສິດຈາກບໍລິສັດແມ່ເຊີ່ງເປັນເຈົ້າຂອງສິດທິບັດທີ່ອະນຸຍາດໃຫ້ປະກອບລົດຈັກ ຫຼື ຜະລິດສິ້ນສ່ວນພ້ອມທັງໃບອະນຸຍາດໃຫ້ນຳໃຊ້ເຄື່ອງໝາຍການຄ້າ ຫຼື ເຄື່ອງໝາຍຜະລິດຕະພັນ ຈຶ່ງສາມາດດຳເນີນກິດຈະການໂຮງງານຢ່າງຖືກຕ້ອງຕາມລະບຽບກົດໝາຍຂອງ ສ ປ ປ ລາວ.

7./ ກ່ອນການນຳເຂົ້າສິ້ນສ່ວນອາໄຫຼ່ທຸກຊະນິດຈາກຕ່າງປະເທດເພື່ອມາປະກອບລົດຈັກ 2 ລໍ້ ໃຫ້ບັນດາໂຮງງານປະກອບລົດຈັກ ຕ້ອງເຮັດແຜນການ ແລະ ສະຫຼຸບປະຈຳປີໃນຕົ້ນປີ ຕາມໃບແຈ້ງການຂອງກະຊວງອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 180/ອຫ.ຫກ,ລົງວັນທີ 26/3/1996 ແລະ ສະບັບເລກທີ 379/ອຫ,ລົງວັນທີ 30/6/1997 ຢ່າງເຂັ້ມງວດ. ການນຳເຂົ້າສິ້ນສ່ວນອາໄຫຼ່ດັ່ງກ່າວໃນແຕ່ລະຄັ້ງບັນດາໂຮງງານປະກອບລົດຈັກຕ້ອງລະບຸໃຫ້ລະອຽດແລະຄົບຖ້ວນບັນດາລາຍການສິ້ນສ່ວນອາໄຫຼ່ຕາມແຜນການ ແລະ ມາດຕະຖານທີ່ກຳນົດ ທີ່ ກ່າວຂ້າງເທິງແລະ ຕາມແບບວິທີປະກອບໃດໜຶ່ງດັ່ງທີ່ກ່າວໃນຂໍ້ 1ແລະ ຂໍ້ 2 ຂ້າງເທິງນັ້ນທຸກປະການ.

8./ ໂຮງງານປະກອບລົດຈັກໃດບໍ່ປະຕິບັດຕາມ ແລະ ລະເມີດຕໍ່ລະບຽບຫຼັກການ ແລະ ມາດຕະຖານການປະກອບລົດຈັກ 2 ລໍ້ ທີ່ກ່າວຂ້າງເທິງນີ້ ໃຫ້ປະຕິບັດຕາມມາດຕາ 38.1 ແລະ/ຫຼື 38.2 ຕາມແຕ່ລະກໍລະນີໜັກ ຫຼື ເບົາ ແລະ ໃຫ້ດຳເນີນການປັບໃໝ ໄປພ້ອມກັນແລ້ວແຕ່ລະກໍລະນີໃນບົດກຳນົດໂທດຂອງປະມວນຂໍ້ຕົກລົງ ວ່າດ້ວຍໂຮງງານ ເລກທີ 103/ອຫ, ລົງວັນທີ 21/2/1992.

9./ ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳເປັນຜູ້ຊີ້ນຳຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດໃບແຈ້ງການສະບັບນີ້ຢ່າງເຂັ້ມງວດ ໂດຍໃຫ້ສອດຄ່ອງ ແລະ ເປັນເອກະພາບກັນກັບລະບຽບກົດໝາຍຂອງຂະແໜງການກ່ຽວຂ້ອງອື່ນໆເຊັ່ນ: ພາສີ,ການຄ້າ,ຄົມມະນາຄົມຂົນສົ່ງ ... ເປັນຕົ້ນດຳລັດເລກທີ 62/ນຍ,ລົງວັນທີ 12/8/1995 ແລະ ອື່ນໆ ແລະ ໃຫ້ລາຍງານໃຫ້ທັນສະພາບການຢ່າງເປັນປົກກະຕິ.

10./ ໃບຢັ້ງຢືນ ຫຼື ເອກະສານທາງການຂອງເຈົ້າໜ້າທີ່ ຫຼື ຂອງຂະແໜງການອຸດສາຫະກຳ ແລະ ຫັດຖະກຳໃນກ່ອນໜ້ານີ້ ທີ່ຂັດກັບເນື້ອໃນແຈ້ງການສະບັບນີ້ ແມ່ນໃຫ້ລົບລ້າງຢ່າງສິ້ນເຊີງ.

11./ ໃຫ້ພະແນກອຸດສາຫະກຳ ແລະ ຫັດຖະກຳແຂວງ,ກຳແພງນະຄອນວຽງຈັນ ແລະ ເຂດພິເສດໄຊສົມບູນຈັດຕັ້ງປະຕິບັດໃບແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນດີ ແລະ ເຂັ້ມງວດ.

ວຽງຈັນ,ວັນທີ........1 MAR 1999

ຕ/ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ຫັດຖະກຳ

ກະຊວງອຸດສາຫະກຳ ແລະ ຫັດຖະກຳ ... ລັດຖະມົນຕີ

ສົມບຸນ ຣາຊ'.ສົມບັດ

<u>ບ່ອນສົ່ງ</u>

- ສຳນັກງານນາຍົກລັດຖະມົນຕີ "ເພື່ອໃຊ້ຕາງລາຍງານ" — 01 ສະບັບ
- ກະຊວງການຄ້າ ແລະ ທ່ອງທ່ຽວ — 01 ສະບັບ
- ກະຊວງການເງິນ (ກົມພາສີ,ກົມສ່ວຍສາອາກອນ...) — 03 ສະບັບ
- ກະຊວງ ຄ ຂ ປ ກ (ກົມຂົນສົ່ງ) "ເພື່ອຊາບ ແລະ ປະສານສົມທົບໃນການຈັດຕັ້ງປະຕິບັດ" — 02 ສະບັບ
- ກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ບັນດາພະແນກອຸດສາຫະກຳ ແລະ ຫັດຖະກຳ ແຂວງ, ກຳແພງນະຄອນວຽງຈັນ ແລະ ເຂດພິເສດໄຊສົມບູນ " ເພື່ອຈັດຕັ້ງປະຕິບັດ " — 20 ສະບັບ
- ບັນດາໂຮງງານປະກອບລົດຈັດ 2 ລໍ້ ທົ່ວປະເທດ " ເພື່ອປະຕິບັດ " — 04 ສະບັບ
- ເກັບມ້ຽນທີ່ວຮ້ອນ "ເປັນສຳເນົາເດີມ" — 01 ສະບັບ